ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ | ເລກທີ 2035 /ຫສນຍ.ກລຂ

ນະຄອນຫຼວງວຽງຈັນ, ວັນທີ 21. 12. 2017

ກະຊວງອຸດສາຫະກຳ ແລະ ການຄ້າ
ເລກທີ 2983
ວັນທີ 22/12/17

ເລກທີ 2375
ວັນທີ 25.12.17

# ແຈ້ງການ

ຮຽນ : - ທ່ານຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນ ທີ່ນັບຖື.

- ທ່ານລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ. ✓
- ທ່ານລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້.
- ທ່ານລັດຖະມົນຕີກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ.

ເລື່ອງ : ການປັບປຸງຂໍ້ຕົກລົງເລກທີ 1833/ອຄ, ລົງວັນທີ 3 ຕຸລາ 2016 ວ່າດ້ວຍລາຍການ ( ບັນຊີ ) ຜະລິດຕະພັນໄມ້ ເພື່ອສົ່ງອອກ.

- ອີງຕາມການຕົກລົງກອງປະຊຸມນາຍົກ-ຮອງນາຍົກລັດຖະມົນຕີ ໂດຍຜ່ານຈົດໝາຍວຽນການປະກອບຄວາມເຫັນຂອງບັນດາທ່ານຮອງນາຍົກລັດຖະມົນຕີ.
- ອີງຕາມການຊີ້ນຳ ແລະ ຕົກລົງຂອງທ່ານນາຍົກລັດຖະມົນຕີ ໃນວັນທີ 8 ທັນວາ 2017.

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບ ດັ່ງນີ້ : ເຫັນດີເພີ່ມບາງລາຍການ ແລະ ຂະໜາດຂອງຜະລິດຕະພັນໄມ້ ເພື່ອສົ່ງອອກຕາມການສະເໜີຂອງກະຊວງອຸດສາຫະກຳ ແລະ ການຄ້າ ຄື:

1. ລາຍການ ( ບັນຊີ ) ຜະລິດຕະພັນໄມ້ ຈາກໄມ້ທຳມະຊາດ ອະນຸຍາດໃຫ້ສົ່ງອອກເພີ່ມ ມີລະອຽດດັ່ງລຸ່ມນີ້ :

1). ໄມ້ບົວ, ແຕ່ໃຫ້ມີການກຳນົດຂະໜາດ ແລະ ຂະບວນການປຸງແຕ່ງ ໃຫ້ຈະແຈ້ງ ແລະ ຄົບຖ້ວນ.

2). ຄວາມຍາວຂອງຜະລິດຕະພັນໄມ້ປູພື້ນ ແມ່ນໃຫ້ເອົາຕາມຄວາມຍາວຂອງໄມ້ທີ່ມີ ( ບໍ່ໃສ່ຂະໜາດ ), ສ່ວນຄວາມໜາ ແລະ ຄວາມກວ້າງຂອງໄມ້ ແມ່ນຮັກສາໄວ້ຄືເກົ່າ.

3). ເຫັນດີໃຫ້ປັບປຸງຂະໜາດຂອບວົງກົບປ່ອງຢ້ຽມ ແລະ ປະຕູ ( ຄວາມຍາວຈາກ 5 ຊັງຕີແມັດ ເປັນ 6 ຊັງຕີແມັດ, ຄວາມກວ້າງ ຈາກ 10 ຊັງຕີແມັດ ເປັນ 12 ຊັງຕີແມັດ. ສ່ວນຄວາມຍາວແມ່ນຮັກສາໄວ້ຄືເກົ່າ.

4). ເຫັນດີໃຫ້ປັບປຸງຂະໜາດຂອງຜະລິດຕະພັນໄມ້ຂອບອັດເປັນຊິ້ນ ( ຄວາມຍາວ ຈາກ 150 ຊັງຕີແມັດ ເປັນ 450 ຊັງຕີແມັດ, ສ່ວນຄວາມໜາ ແລະ ຄວາມກວ້າງແມ່ນຮັກສາໄວ້ຄືເກົ່າ.

5). ເຫັນດີໃຫ້ສົ່ງອອກໄມ້ລູກຕັ້ງ, ແຕ່ໃຫ້ມີການກຳນົດຂະໜາດ ແລະ ຂະບວນການປຸງແຕ່ງໃຫ້ຈະແຈ້ງ ແລະ ຄົບຖ້ວນ.

6). ເຫັນໃຫ້ປັບປຸງຂະໜາດຜະລິດຕະພັນ ໄມ້ແກະສະຫລັກເປັນແຜ່ນດຽວ ( ຄວາມໜາ ຈາກ 2,5 ຊັງຕີແມັດ ມາເປັນ 5 ຊັງຕີແມັດ, ຄວາມຍາວ ຈາກ 100 ຊັງຕີແມັດ ມາເປັນ 200 ຊັງຕີແມັດ. ສ່ວນຄວາມກວ້າງ 30 ຊັງຕີແມັດ ແມ່ນຮັກສາໄວ້ຄືເກົ່າ ) ແລະ ຕ້ອງມີການແກະສະຫລັກ ຫຼື ຄວັດ 90% ຂຶ້ນໄປ.

7). ເຫັນດີໃຫ້ສົ່ງອອກຜະລິດຕະພັນ ໄມ້ ທີ່ເປັນໂຕະໜ້າມົນໄມ້ແຜ່ນດຽວ , ແຕ່ໃຫ້ກຳນົດຄວາມໜາ ແລະ ເສັ້ນຜ່າໃຈກາງ ໃຫ້ລະອຽດຈະແຈ້ງ.

2. ລາຍການ ( ບັນຊີ ) ຜະລິດຕະພັນໄມ້ ຈາກໄມ້ປູກ ( ໄມ້ອີກ, ໄມ້ກະຖິນນາລົງ, ກະຖິນເທພາ ແລະ ໄມ້ຢາງພາລາ ) ມີລາຍລະອຽດລຸ່ມນີ້ :

1). ຖ່ານໄມ້ຈາກໄມ້ປູກ ທຸກຂະໜາດ.

2). ຜະລິດຕະພັນໄມ້ປອກ, ໄມ້ຝານ ຈາກສວນປູກ.

3). ຜະລິດຕະພັນໄມ້ປູພື້ນ S4S.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ປະຕິບັດຕາມເນື້ອໃນແຈ້ງການສະບັບນີ້ດ້ວຍ.

ລັດຖະມົນຕີ,

ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

ເພັດ ພົມພິພັກ

<u>ບ່ອນນຳສົ່ງ</u>

- ນາຍົກ-ຮອງນາຍົກລັດຖະມົນຕີ 04 ສະບັບ
- ຫ້ອງວ່າການສູນກາງພັກ 01 ສະບັບ
- ອົງການກວດກາລັດຖະບານ 01 ສະບັບ
- ສຳເນົາ 08 ສະບັບ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ອຸດສາຫະກຳ ແລະ ການຄ້າ | ເລກທີ 0002/ອຄ.ກອຫ

ນະຄອນຫຼວງວຽງຈັນ, ວັນທີ 03 ມັງກອນ 2018

# ຂໍ້ຕົກລົງ

## ວ່າດ້ວຍ ການຮັບຮອງເອົາລາຍການ (ບັນຊີ) ຜະລິດຕະພັນໄມ້ ເພື່ອສົ່ງອອກ (ສະບັບປັບປຸງ)

- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງ ອຸດສາຫະກຳ ແລະ ການຄ້າ ເລກທີ 230/ນຍ, ວັນທີ 24 ກໍລະກົດ 2017.
- ອີງຕາມ ຄຳສັ່ງຂອງທ່ານນາຍົກລັດຖະມົນຕີເລກທີ 15/ນຍ, ລົງວັນທີ 13 ພຶດສະພາ 2016 ວ່າດ້ວຍການເພີ່ມທະວີຄວາມເຂັ້ມງວດໃນການຄຸ້ມຄອງ ແລະ ກວດກາການຂຸດຄົ້ນໄມ້, ການເຄື່ອນຍ້າຍໄມ້ ແລະ ທຸລະກິດໄມ້.
- ອີງຕາມ ແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ເລກທີ 2035/ຫສນຍ.ກລຂ, ວັນທີ 21 ທັນວາ 2017.

**ລັດຖະມົນຕີກະຊວງ ອຸດສາຫະກຳ ແລະ ການຄ້າ ອອກຂໍ້ຕົກລົງ**

**ມາດຕາ 1. ການຮັບຮອງ**

ຮັບຮອງເອົາລາຍການ (ບັນຊີ) ຜະລິດຕະພັນໄມ້ ເພື່ອສົ່ງອອກ (ສະບັບປັບປຸງ) ດັ່ງນີ້:

1.1 ລາຍການ (ບັນຊີ) ຜະລິດຕະພັນ "ໄມ້ທຳມະຊາດ" ເພື່ອສົ່ງອອກ (ເອກະສານຊ້ອນທ້າຍ 01).

1.2 ລາຍການ (ບັນຊີ) ຜະລິດຕະພັນ "ໄມ້ປູກ" ເພື່ອສົ່ງອອກ (ເອກະສານຊ້ອນທ້າຍ 02).

1.3 ລາຍການ (ບັນຊີ) ຜະລິດຕະພັນ "ໄມ້ປ່ອງ ແລະ ຫວາຍ" ເພື່ອສົ່ງອອກ (ເອກະສານຊ້ອນທ້າຍ 03).

**ມາດຕາ 2. ການຈັດຕັ້ງປະຕິບັດ**

ມອບໃຫ້ ກົມອຸດສາຫະກຳ ແລະ ຫັດຖະກຳ ອອກຄຳແນະນຳ ກ່ຽວກັບລາຍການ (ບັນຊີ) ຜະລິດຕະພັນໄມ້ເພື່ອສົ່ງອອກສະບັບປັບປຸງ.

ມອບໃຫ້ ພະແນກ ອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 3. ຜົນບັງຄັບໃຊ້**

ຂໍ້ຕົກລົງສະບັບນີ້ ໃຊ້ປ່ຽນແທນ ຂໍ້ຕົກລົງ ສະບັບເລກທີ 1833/ອຄ, ລົງວັນທີ 03 ຕຸລາ 2016 ແລະ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ລັດຖະມົນຕີ**

ກະຊວງອຸດສາຫະກຳແລະການຄ້າ
ລັດຖະມົນຕີ

ນ ເຂັມມະນີ ພົນເສນາ

## ລາຍການ (ບັນຊີ) ຜະລິດຕະພັນ “ໄມ້ທຳມະຊາດ” ເພື່ອສົ່ງອອກ

| ລະຫັດເກົ່າ Heading | ລະຫັດຍ່ອຍ Sub-Heading | ລາຍການຜະລິດຕະພັນໄມ້ “Wooden products or Wooden finish-products” | | ຂະໜາດບໍ່ກາຍ (ຊມ) Maximum size (Cm) | | | ໝາຍເຫດ |
|---|---|---|---|---|---|---|---|
| | | ພາສາລາວ ‘Lao’ | ພາສາອັງກິດ ‘English’ | ໜາ Thick | ກ້ວາງ Wide | ຍາວ Length | |
| 44.01 | | **1. ຜະລິດຕະພັນຂີ້ເລື່ອຍອັດແທ່ງ ແລະ ອັດເມັດ** | **1. Wooden Briquettes, Pellets** | | | | |
| | 4401.22.00 | 1.1 ຂີ້ເລື່ອຍອັດແທ່ງ | 1.1 Wooden briquettes | | | | |
| | 4401.31.00 | 1.2 ຂີ້ເລື່ອຍອັດເມັດ | 1.2 Wooden pellets | | | | |
| 44.02 | 4402.90.90 | **2. ຜະລິດຕະພັນຖ່ານໄມ້** | **2. Wooden Charcoal** | | | | |
| | | 2.1 ຖ່ານຂາວ | 2.1 White Charcoal | | | | |
| | | 2.2 ຖ່ານອັດແທ່ງ ຫຼື ອັດເມັດຈາກຂີ້ເລື່ອຍ | 2.2 Sawdust Charcoal | | | | |
| 44.09 | 4409.29.00 | **3. ຜະລິດຕະພັນໄມ້ປັກເກ້, ໄມ້ປູພື້ນ ສຳລັບພາຍໃນ.** | **3. Wooden Parquet, Interior flooring.** | | | | |
| | | 3.1. **ຜະລິດຕະພັນໄມ້ປັກເກ້** | **3.1 Parquet** | | | | |
| | | 3.1.1 ໄມ້ປັກເກ້ສິ້ນດຽວ | 3.1.1 Solid parquet | ≤ 2.5 | ≤ 20 | ≤ 100 | |
| | | 3.1.2 ໄມ້ປັກເກ້ເຊື່ອມຕໍ່ປະສານ | 3.1.2 FJL Parquet | ≤ 2.5 | ≤ 20 | ≤ 100 | |
| | | 3.1.3 ໄມ້ປັກເກ້ໂມເສດ | 3.1.3 Mosaic Parquet | ≤ 2.5 | ≤ 50 | ≤ 50 | |
| | | 3.2 **ຜະລິດຕະພັນໄມ້ປູພື້ນ** | **3.2 Flooring** | | | | |
| | | 3.2.1 ໄມ້ປູພື້ນສິ້ນດຽວ | 3.2.1 OPC Flooring | ≤ 2.5 | ≤ 20 | - | 3.2: “3.2.1-3.2.4”ເພີ່ມຂະໜາດຄວາມຍາວ (ບໍ່ຈຳກັດຂະໜາດ) |
| | | 3.2.2 ໄມ້ປູພື້ນເຊື່ອມຕໍ່ສິ້ນດຽວ | 3.2.2 UNI Flooring | ≤ 2.5 | ≤ 20 | - | |
| | | 3.2.3 ໄມ້ປູພື້ນຕໍ່ເຊື່ອມຕໍ່ປະສານ | 3.2.3 FJL Flooring | ≤ 2.5 | ≤ 20 | - | |
| | | 3.2.4 ໄມ້ປູພື້ນອັດເປັນຊັ້ນ | 3.2.4 Engineered flooring | ≤ 2.5 | ≤ 20 | - | |
| | | 3.2.5 ໄມ້ແຜ່ນພື້ນເດັກກິງ | 3.2.5 Decking tile | ≤ 3 | ≤50 | ≤ 50 | |
| | | 3.3 **ຜະລິດຕະພັນໄມ້ແອ້ມຝາ ແລະ ເພດານ** | **3.3 Wall and ceiling Panel** | | | | |
| | | 3.3.1 ໄມ້ເພດານແບບຮ່ອງຕົວວີ (V) | 3.3.1 V Ceiling Panel | ≤1,5 | ≤ 20 | ≤ 400 | |
| | | 3.3.2 ໄມ້ເພດານແບບຕໍ່ເຊື່ອມປະສານ | 3.3.2 FJL Ceiling Panel | ≤ 1,5 | ≤ 20 | ≤ 400 | |
| | | 3.3.3 ໄມ້ແອ້ມຝາ ແລະເພດານແບບອັດເປັນຊັ້ນ | 3.3.3 Engineering Panel | ≤ 1.5 | ≤ 20 | ≤ 400 | |
| | | 3.3.4 ໄມ້ແອ້ມຝາແບບມູນ | 3.3.4. Logged Panel | ≤ 3.5 | ≤ 20 | ≤ 400 | |
| | | 3.4 **ຜະລິດຕະພັນໄມ້ຕໍ່ເປັນເສັ້ນ** | **3.4 Finger Joint Wood** | ≤ 5 | ≤ 10 | ≤ 600 | |
| | | **4. ຜະລິດຕະພັນໄມ້ອັດ** | **4. Plywood** | | | | |
| 44.10 | 4410.11.00 | 4.1 ໄມ້ອັດຈາກ ຂີ້ເລື່ອຍ, ຂີ້ກົບ | 4.1 Particle Board | ≤ 5 | ≤ 122 | ≤ 244 | |
| 44.11 | 4411.00.00 | 4.2 ໄມ້ອັດຈາກເສດໄມ້ບົດ | 4.2 MDF Board | ≤ 5 | ≤ 122 | ≤ 244 | |
| | | 4.3 ໄມ້ອັດຈາກໄຍໄມ້ | 4.3 Fibre board | | | | |
| 44.12 | 4412.99.00 | 4.4 ໄມ້ອັດຈາກໄມ້ປອກ | 4.4 Plywood from veneer | ≤ 5 | ≤ 122 | ≤ 244 | |
| | 4412.94.00 | 4.5 ໄມ້ອັດບ໊ອກບອດ | 4.5 Block board | ≤ 5 | ≤ 122 | ≤ 244 | |
| | 4412.94.00 | 4.6 ໄມ້ອັດປະສານ, ໄມ້ອັດເຊື່ອມຕໍ່ປະສານ | 4.6 Laminated Board, FJL Board | ≤ 5 | ≤ 122 | ≤ 244 | |
| | 4412.99.00 | 4.7 ໄມ້ອັດປະສານສຳລັບໜ້າໂຕະ | 4.7 Laminated Board for Table top | ≤ 5 | ≤ 100 | ≤ 600 | |
| | | **5. ເຄື່ອງໃຊ້ສອຍທີ່ເຮັດດ້ວຍໄມ້** | **5. Wooden handle products** | | | | |
| 44.14 | 4414.00.00 | 5.1 ຂອບສຳລັບແຕ້ມຮູບ, ຂອບຮູບ, ຂອບແວ່ນ | 5.1 Wooden frames for paintings, photographs and mirrors | | | | |
| 44.15 | 4415.00.00 | 5.2 ຫີບ, ກັບ, ລັງ, ຖັງ ແລະ ສິ່ງຫຸ້ມຫໍ່ຄ້າຍຄຶງ, ແກນມ້ວນສາຍກາບ ທີ່ເຮັດ | 5.2 Packing cases, boxes, creates, drums, and similar packing, wood | | | | |

| | | | | | | | |
|---|---|---|---|---|---|---|---|
| | | ດ້ວຍໄມ້ | cable drums. | | | | |
| | 4415.10.00 | 5.2.1 ຫີບ, ຫີບນ້ອຍ, ຫີບໂປ່ງ, ຖັງກົມ (ສຳລັບບັນຈຸສິ່ງຂອງ) | 5.2.1 Cases, boxes, crates, cable | | | | |
| | 4415.20.00 | 5.2.2 ແຜ່ນຖາດ, ຖາດ-ຫີບ ແລະ ຖາດໃສ່ຂອງອື່ນໆ ທີ່ໃຊ້ສຳລັບຮອງ ແລະ ເຄື່ອນຍ້າຍສິນຄ້າ | 5.2.2 Pallets, box pallets and other load boards (Wooden Tray) | | | | |
| 44.16 | 4416.00.10<br>4416.00.90 | 5.3 ອ່າງ, ຖັງເຮັດດ້ວຍໄມ້<br>5.3.1 ຖັງ<br>5.3.2 ອ່າງ | 5.3 Wooden Barrels, Staves<br>5.3.1 Staves<br>5.3.2 Barrels | | | | |
| 44.17 | 4417.00.90<br>4417.00.10 | 5.4 ດ້າມເຄື່ອງມືທີ່ເຮັດດ້ວຍໄມ້<br>5.4.1 ດ້າມຟອຍ ຫຼື ແປງ ແລະ ອື່ນໆ ສຳລັບຮັບໃຊ້ການຜະລິດ (ເສັ້ນຜ່າໃຈກາງບໍ່ເກີນ 4 ຊມ, ນຳໃຊ້ໄມ້ຄຸ້ມຄອງ 1.2.3).<br>5.4.2 ຮູບຫຸ່ນເກີບບູດ, ສົ້ນເກີບ | 5.4 Tools, tool handles of wood<br>5.4.1 Tool handles, broom or brush bodies<br>5.4.2 Handles, boot or shoe lasts of wood | | | | |
| | | **6. ຜະລິດຕະພັນໄມ້ປະກອບໃນອາຄານ** | **6. Builders' joinery and carpentry of wood** | | | | |
| 44.18 | 4418.10.00 | **6.1 ຊຸດປ່ອງຢ້ຽມ** | **6.1 Windows** | | | | 6.1 ປັບຂະໜາດຄວາມໜາ, ກວ້າງ ຂອງ ວົງກົບປ່ອງຢ້ຽມ |
| | | 6.1.1 ວົງກົບປ່ອງຢ້ຽມ ສຳເລັດຮູບ (ຖອດຊິ້ນສ່ວນ ຫຼື ບໍ່ຖອດ) | 6.1.1 Window frames (knock-down) | ≤ 6 | ≤ 12 | ≤ 250 | |
| | | 6.1.2 ບານປ່ອງຢ້ຽມ ສຳເລັດຮູບ | 6.1.2 Window | ≤ 3.5 | ≤ 100 | ≤ 200 | |
| | 4418.20.00 | **6.2 ຊຸດປະຕູ** | **6.2 Doors** | | | | 6.2 ປັບຂະໜາດຄວາມໜາ, ກວ້າງ ຂອງ ວົງກົບປະຕູ |
| | | 6.2.1 ວົງກົບປະຕູສຳເລັດຮູບ (ຖອດຊິ້ນສ່ວນ ຫຼື ບໍ່ຖອດ) | 6.2.1 Door frames (knock-down) | ≤ 6 | ≤ 12 | ≤ 250 | |
| | | 6.2.2 ບານປະຕູ ສຳເລັດຮູບ | 6.2.2 Door | ≤ 4.5 | ≤ 100 | ≤ 250 | |
| | | 6.2.3 ບານຕູ້ເຮືອນຄົວ | 6.2.3 Kitchen doors | ≤ 3 | ≤ 50 | ≤ 80 | |
| | 4418.50.00 | **6.3 ແຜ່ນໄມ້ມຸງຫຼັງຄາ** | **6.3 Wooden shingles** | ≤ 2.5 | ≤ 20 | ≤ 50 | |
| | 4418.50.00 | 6.4 ແຜ່ນໄມ້ຮົ້ວ | 6.4 Wooden fences | ≤ 2.5 | ≤ 15 | ≤ 180 | |
| | 4418.71.00 | 6.5 ແຜ່ນໄມ້ປະກອບແບບລາຍໂມເສດ | 6.5 Assembled flooring panel for mosaic floor | ≤ 3 | ≤ 150 | ≤ 150 | |
| | 4418.72.00 | 6.6 ຜະລິດຕະພັນໄມ້ຂອບອັດເປັນຊັ້ນ | 6.6 Multilayer Scantlings | ≤ 9 | ≤ 9 | ≤ 450 | 6.6. ປັບຄວາມຍາວ |
| | | 6.7 ຜະລິດຕະພັນໄມ້ບົວ | 6.7 Mounded Timber Products | ≤ 3 | ≤ 12 | ບໍ່ຈຳກັດ | 6.7. ເພີ່ມເຂົ້າໃໝ່ |
| | 4418.72.00 | **6.8 ຊຸດຂັ້ນໄດ** | **6.8 Staircases** | | | | |
| | | 6.8.1 ແປ້ນຂັ້ນໄດຕົວນອນ | 6.8.1 Horizontal stair board | ≤ 3.5 | ≤ 30 | ≤ 150 | |
| | | 6.8.2 ແປ້ນຂັ້ນໄດຕົວຕັ້ງ | 6.8.2 Vertical stair board | ≤ 2.2 | ≤ 22 | ≤ 150 | |
| | | 6.9 ຜະລິດຕະພັນໄມ້ ລູກຕັ້ງ | 6.9 Balustrades Timber Product | | | | 6.9. ເພີ່ມເຂົ້າໃໝ່ |
| | | 6.9.1 ລູກຕັ້ງຮູບຊົງກົມ (ໜ້າຕາງ≤12 ຊມ) | 6.9.1 Round balustrade (Diameter≤12 Cm) | - | - | ≤ 120 | |
| | | 6.9.2 ລູກຕັ້ງ ຮູບຊົງສີ່ຫຼ່ຽມ | 6.9.2 Square balustrade | ≤ 12 | ≤ 12 | ≤ 120 | |
| | | **7. ເຄື່ອງຫັດຖະກຳ ທີ່ເຮັດດ້ວຍໄມ້** | **7. Other article of wood** | | | | |
| 44.19 | 4419.00.00 | **7.1 ຜະລິດຕະພັນໄມ້ທີ່ໃຊ້ເທິງໂຕະອາຫານ, ເຮືອນຄົວເຊັ່ນ**: ຖ້ວຍ, ຊາມ, ຖາດ, ໂອ່ງ, ຈານ, ໄມ້ກະດ້າມ, ບ່ວງ, ຊ້ອມ, ດ້າມມີດ. | 7.1 Tableware and kitchenware of wood | | | | |
| | | **7.2 ຂຽງ** | **7.2 Cutting Boards** | | | | |
| | | 7.2.1 ຂຽງສີ່ຫຼ່ຽມຍາວ | 7.2.1 Square cutting boards | ≤ 5 | ≤ 30 | ≤ 50 | |

| | | | | | | | |
|---|---|---|---|---|---|---|---|
| | | 7.2.2 ຂຽງໜ້າມົນ (ໜ້າຕ້າງ ≤30 ຊມ, ຄວາມໜາ ≤5 ຊມ)<br>7.2.3 ຂຽງສີ່ລ່ຽມມົນທົນ | 7.2.2 Round cutting boards<br>7.2.3 Square cutting board | ≤5<br>≤ 5 | -<br>≤ 30 | -<br>≤ 30 | |
| 44.20 | 4420.10.00 | 7.3 ຜະລິດຕະພັນເຄື່ອງຫັດຖະກຳໄມ້ ແລະ ເຄື່ອງໄມ້ແກະສະຫຼັກ, ແຜ່ນໄມ້ແກະສະຫຼັກ, ແຜ່ນລາຍປາດສະລຸ<br>7.3.1 ແຜ່ນໄມ້ແກະສະຫລັກແປັນແຜ່ນດຽວ (ແກະສະຫລັກ ແລະ ຄວັດ ≥ 90%) | 7.3 Wooden handicrafts and carving products, carving boards<br>7.3.1 Carving products (Carving ≥ 90%) | ≤ 5 | ≤ 30 | ≤ 200 | 7.3.1. ປັບ ຄວາມ ໜາ & ຍາວ |
| 44.21 | 4421.10.00<br>4421.90.10<br>4421.90.20<br>4421.90.94<br>4421.90.99 | 7.4 ຜະລິດຕະພັນຂໍເກາະເສື້ອ<br>7.5 ຜະລິດຕະພັນແກນ, ຫຼອດ, ກະສວຍ, ຫຼອດດ້າຍທຍິບຜ້າ<br>7.6 ໄມ້ຂີດໄຟ<br>7.7 ໄມ້ຈີ້ມແຂ້ວ<br>7.8 ລູກປັດສຳລັບນັກບວດ, ໄມ້ກ້ານສໍ (44.08 “4408.90.00; 4408.90.90 & 4408.39)<br>7.9 ເຄື່ອງດົນຕີທີ່ເຮັດດ້ວຍໄມ້ | 7.4 Wooden clothes hangers<br>7.5 Cops and bobbins, sewing thread reels<br>7.6 Match splints<br>7.7 Toothpicks<br>7.8 Prayer beads, Pencils<br>7.9 Musical instruments of wood | | | | |
| | | **8. ເຄື່ອງເຟີນີເຈີທີ່ເຮັດດ້ວຍໄມ້** | **8. Wooden Furniture** | | | | |
| 94.01<br><br>94.03 | 9401.61.00<br>9401.61.00<br>9403.60.10<br><br><br>9403.60.10<br>9403.60.10<br>9403.00.00<br>9403.30.00<br>9403.40.00<br>9403.50.00 | 8.1 ສະໂລງໄມ້, ສະໂລງໄມ້ຫຸ້ມເບາະທຸກຊະນິດສຳເລັດຮູບ.<br>8.2 ຕັ່ງໄມ້, ຕັ່ງໄມ້ຫຸ້ມເບາະທຸກຊະນິດສຳເລັດຮູບ ສາມາດແຍກອອກ ຫຼື ປະກອບເຂົ້າກັນໄດ້ທັນທີ<br>8.3 ໂຕະໄມ້<br>8.3.1: ໂຕະໄມ້ທຸກຊະນິດສຳເລັດຮູບ ສາມາດແຍກອອກ ຫຼື ປະກອບເຂົ້າກັນໄດ້ທັນທີ<br>8.3.2: ໂຕະໜ້າມົນໄມ້ແຜ່ນດຽວ (ເສັ້ນຜ່າໃຈກາງນ້ອຍກ່ວາ ຫຼື ເທົ່າກັບ≤120 ຊມ)<br>8.4 ຕູ້ໄມ້ທຸກຊະນິດສຳເລັດຮູບ ສາມາດແຍກອອກ ຫຼື ປະກອບເຂົ້າກັນໄດ້ທັນທີ<br>8.5 ຕຽງ ໄມ້ທຸກຊະນິດສຳເລັດຮູບສາມາດແຍກອອກ ຫຼື ປະກອບເຂົ້າກັນໄດ້ທັນທີ<br>8.6 ເຄື່ອງຕົບແຕ່ງອື່ນໆ ທີ່ເປັນເຟີນີເຈີທີ່ເຮັດດ້ວຍໄມ້<br>8.6.1 ເຄື່ອງເຟີນີເຈີທີ່ໃຊ້ໃນຫ້ອງການ<br>8.6.2 ເຄື່ອງເຟີນີເຈີທີ່ໃຊ້ໃນເຮືອນຄົວ<br>8.6.3 ເຄື່ອງເຟີນີເຈີທີ່ໃຊ້ໃນຫ້ອງນອນ | 8.1 Wooden Sofa<br>8.2 Wooden Chairs (Fixed or Knock-down)<br>8.3 Wooden Tables (Fixed or Knock-down)<br>8.3.1 Wooden Tables (Fixed or Knock-down)<br>8.3.2 Wooden round table from natural timber (diameter must be smaller or equal ≤ 120 Cm)<br>8.4 Wooden Cabinets (Fixed or Knock-down)<br>8.5 Wooden Bed (Fixed or Knock-down)<br>8.6 Decorative and furniture of wood<br>8.6.1 Furniture of a kind used in office<br>8.6.2 Furniture of a kind used in kitchen<br>8.6.3 Furniture of a kind used in bedroom | ≤ 5 | - | - | 8.3.2 ເພີ່ມເຂົ້າໃໝ່ |

## ລາຍການ (ບັນຊີ) ຜະລິດຕະພັນ "ໄມ້ປູກ" ເພື່ອສົ່ງອອກ

(ໄມ້ວິກ, ໄມ້ກະຖິນນາລົງ, ກະຖິນເທພາ ແລະ ໄມ້ຢາງພາລາ)

| ລະຫັດເຄົ້າ Heading | ລະຫັດຍ່ອຍ Sub-Heading | ລາຍການຜະລິດຕະພັນໄມ້ "Wooden products or Wooden finish-products" | | ຂະໜາດບໍ່ກາຍ (ຊມ) Maximum size (Cm) | | | ໝາຍເຫດ |
|---|---|---|---|---|---|---|---|
| | | ພາສາລາວ 'Lao' | ພາສາອັງກິດ 'English' | ໜາ Thick | ກ້ວາງ Wide | ຍາວ Length | |
| 44.02 | 4402.90.90 | **1. ຜະລິດຕະພັນຖ່ານໄມ້** | 1. Wooden Charcoal | | | | |
| | | 1.1 ຜະລິດຕະພັນຖ່ານໄມ້ ທຸກຂະໜາດ | 1.2 All size of charcoal | | | | ເພີ່ມເຂົ້າໃໝ່ |
| 44.04 | 4404.10.00 | **2. ໄມ້ຄ້ຳແບບ, ໄມ້ຂ້າວ, ໄມ້ຮົ້ວ (ໄມ້ກົມ), ໄມ້ເລື່ອຍເປັນແຜ່ນ** | 2. Split poles; piles, pickets, stakes of wood and Sawn wood | | | | |
| | | 2.1ໄມ້ຄ້ຳແບບ, ໄມ້ຂ້າວ, ໄມ້ຮົ້ວ (ເສັ້ນຜ່າໃຈກາງ ≤ 12 ຊມ) | 2.1 Split poles; piles, pickets, stakes of wood (Diameter≤12) Cm | | | | |
| | | 2.2 ໄມ້ເລື່ອຍເປັນແຜ່ນ | 2.2 Sawn wood | ≤ 5 | ≤ 15 | ≤ 200 | |
| 44.04 | 4404.20.10 | **3. ໄມ້ເກດສະໜາ (ບົດເປັນຝຸ່ນ ຫຼື ສັບເປັນປ່ຽງນ້ອຍ)** | 3. Chip Wood from Agar wood | | | | |
| 44.05 | 4405.00.10 | **4. ຜະລິດຕະພັນເຫຍື່ອໄມ້** | 4. Wood wool, wood flour | | | | |
| 44.08 | | **5. ຜະລິດຕະພັນໄມ້ປອກ ແລະ ໄມ້ຝານ ຈາກໄມ້ປູກ:** | 5. Planted Veneer and Slicing Board Product | | | | |
| | | 5.1 ໄມ້ປອກ<br>5.2 ໄມ້ຝານ | 5.1 Veneer<br>5.2 Slicing Board | ≤ 0.6<br>≤ 0.6 | ≤ 150<br>≤ 150 | ≤ 300<br>≤ 300 | ເພີ່ມເຂົ້າໃໝ່ |
| **44.09** | | **6. ຜະລິດຕະພັນໄມ້ ປູພື້ນ S4S** | 6. S4S Flooring | ≤ 5 | ≤ 20 | ≤ 600 | ເພີ່ມເຂົ້າໃໝ່ |
| **44.15** | 4415.00.00 | **7. ຜະລິດຕະພັນໄມ້ ພາເລດ** | 7. Wooden pallets | ≤ 5 | ≤ 15 | ≤ 200 | |

**ໝາຍເຫດ**: ຜະລິດຕະພັນອື່ນໆ ຂອງໄມ້ປູກ (ໄມ້ວິກ, ໄມ້ກະຖິນນາລົງ, ໄມ້ກະຖິນເທພາ ແລະ ໄມ້ຢາງ ພາລາ) ແລະ ໄມ້ປູກອື່ນໆ ທີ່ບໍ່ນອນໃນເອກະສານຊ້ອນທ້າຍ 02 ນີ້, ຖ້າຫາກວ່າມີການຜະລິດ-ປຸງແຕ່ງ ຕາມຮູບແບບ, ຄຸນລັກສະນະ ທີ່ກຳນົດໃນລາຍການ (ບັນຊີ) ຜະລິດຕະພັນ "ໄມ້ທຳມະຊາດ" ເພື່ອສົ່ງອອກ ໃນເອກະສານຊ້ອນທ້າຍ 01 ຂອງຂໍ້ຕົກລົງ ສະບັບນີ້ ແມ່ນອະນຸຍາດໃຫ້ສົ່ງອອກໄດ້.

| ລາຍການ (ບັນຊີ) ຜະລິດຕະພັນ "ໄມ້ປ່ອງ ແລະ ຫວາຍ" ເພື່ອສົ່ງອອກ | | | | | | | |
|---|---|---|---|---|---|---|---|
| ລະຫັດເຄົ້າ Heading | ລະຫັດຍ່ອຍ Sub-Heading | ລາຍການຜະລິດຕະພັນໄມ້ "Wooden products or Wooden finish-products" | | ຂະໜາດບໍ່ກາຍ (ຊມ) Maximum size (Cm) | | | ໝາຍເຫດ |
| | | ພາສາລາວ 'Lao' | ພາສາອັງກິດ 'English' | ໜາ Thick | ກ້ວາງ Wide | ຍາວ Length | |
| 94.03 | 9403.81.00 | **1. ຜະລິດຕະພັນ ທີ່ເຮັດດ້ວຍໄມ້ປ່ອງ ແລະ ຫວາຍ** | **1. Bamboo and Rattan Products** | | | | |
| | | 1.1 ຜະລິດຕະພັນ ຈາກໄມ້ປ່ອງ.<br>1.1.1 ເຄື່ອງເຟີນີເຈີ ແລະ ເຄື່ອງໃຊ້ສອຍທີ່ເຮັດດ້ວຍໄມ້ປ່ອງ.<br>1.1.2 ເຄື່ອງຈັກສານທີ່ເຮັດດ້ວຍໄມ້ປ່ອງ<br>1.1.3 ຜະລິດຕະພັນໄມ້ປ່ອງອື່ນໆ.<br><br>1.2 ຜະລິດຕະພັນສຳເລັດຮູບທີ່ເຮັດດ້ວຍຫວາຍ<br>1.2.1 ເຄື່ອງເຟີນີເຈີທີ່ເຮັດດ້ວຍຫວາຍ<br>1.2.2 ເຄື່ອງຈັກສານທີ່ເຮັດດ້ວຍຫວາຍ<br>1.2.3 ຜະລິດຕະພັນຫວາຍສຳເລັດຮູບອື່ນໆ | 1.1 Bamboo products<br>1.1.1 Furniture and accessories made from bamboo<br>1.1.2 Bamboo Plaiting Products<br>1.1.3 Bamboo Products<br><br>1.2 Rattan products<br>1.2.1 Rattan furniture<br>1.2.2 Rattan Plaiting products<br>1.2.3 Other finished rattan product | | | | |

## I. ຮູບພາບ: ລາຍການ (ບັນຊີ) ຜະລິດຕະພັນ “ໄມ້ທຳມະຊາດ” ເພື່ອສົ່ງອອກ

<table>
<tr><td colspan="2">1 - 44.01 ຜະລິດຕະພັນຂີ້ເລື່ອຍອັດແທ່ງ ແລະ ອັດເມັດ</td></tr>
<tr><td>1.1- 4401.22.00 ຂີ້ເລື່ອຍອັດແທ່ງ<br><br></td><td>1.2 - 4401.31.00 ຂີ້ເລື່ອຍອັດເມັດ<br><br></td></tr>
<tr><td colspan="2">2 - 44.02 – 4402.90.90 ຜະລິດຕະພັນຖ່ານຂາວ, ຖ່ານອັດແທ່ງຈາກຂີ້ເລື່ອຍ</td></tr>
<tr><td><br></td><td><br></td></tr>
<tr><td colspan="2">3 - 44.09 – 4409.29.00 ຜະລິດຕະພັນໄມ້ປັກເກ້, ໄມ້ປູພື້ນ ສຳລັບພາຍໃນ</td></tr>
<tr><td colspan="2">3.1 ຜະລິດຕະພັນໄມ້ປັກເກ້</td></tr>
</table>

3.1.1 ໄມ້ປັກເກົ້າເສັ້ນດຽວ










3.1.2 ໄມ້ປັກເກົ້າເຊື່ອມຕໍ່ປະສານ





3.1.3 ໄມ້ປັກເກົ້າໂມເສດ





3.2 ຜະລິດຕະພັນໄມ້ປູພື້ນ








3.3 - ຜະລິດຕະພັນໄມ້ແອ້ມຝາ ແລະ ເພດານ


I. ແບບຮ່ອງ V
ຂະໜາດ:
1.1x9 /11x100/150/200 cm
II. ແບບຮ່ອງສາຍຝົນ
ຂະໜາດ:
1.1x9/11x100/150/200 cm
III. ແບບຕໍ່ຂໍ້ປະສານ (FJL)
ຂະໜາດ:
1.25/1.5x9/12/15x100/150/200 cm
ຂະໜາດ:
1.25 x 9/12x100/150/200 cm
V. ແບບຜ່າໄມ້
ຂະໜາດ:
2.2x7/9x100/150/200 cm




การติดตั้งไม้ฝาแบบไสนอน/ไสสี่หน้า



3.4 ຜະລິດຕະພັນໄມ້ຕໍ່ເປັນເສັ້ນ



## 4 - 44.10; 44.11; 44.12 ຜະລິດຕະພັນໄມ້ອັດ

4.1 – 44.10 ໄມ້ອັດຈາກຂີ້ເລື່ອຍ, ຂີ້ກົບ





4.2 & 4.3 - 44.11 – 4411.00.00 ໄມ້ອັດຈາກໄມ້ບົດ ແລະ ໄຍໄມ້





4.4 – 44.12 – 4412.99.00 ໄມ້ອັດຈາກໄມ້ປອກ (Veneer)





4.5 - 44.12 - 4412.94.00 ໄມ້ອັດບ໊ອກບອດ




4.6 – 44.12 – 4412.94.00 ໄມ້ອັດປະສານ, ໄມ້ອັດຕໍ່ປະສານ





4.7 - 44.12 - 4412.99.00 ໄມ້ອັດປະສານສຳລັບໜ້າໂຕະ









**5 - 44.14 ເຄື່ອງໃຊ້ສ້ອຍທີ່ເຮັດດ້ວຍໄມ້**

5.1 - 4414.00.00 ຂອບສຳລັບແຕ້ມຮູບ ,ບຂອບຮູ ,ຂອບແວ່ນ





5.2-4415.00.00 ຫີບ, ກັບ, ລັງ, ຖັງ ແລະ ສິ່ງຫຸ້ມຫໍ່ຄ້າຍຄຽງ, ແກນມ້ວນສາຍກາບ, ພາເລດທີ່ເຮັດດ້ວຍໄມ້





5.2.1 – 4415.10.00 ຫີບ, ຫີບນ້ອຍ, ຫີບໂປ່ງ, ຖັງກົມ




5.2.2 – 4415.20.00 ແຜ່ນຖາດ, ຖາດ-ຫີບ ແລະ ຖາດໃສ່ຂອງອື່ນໆ ທີ່ໃຊ້ສໍາລັບຮອງ ແລະ ເຄື່ອນຍ້າຍສິນຄ້າ



5.3 – 5.3.1 & 5.3.2 – 44.16 – 4416.00.10 & 4416.00.90 ອ່າງ, ຖັງເຮັດດ້ວຍໄມ້



5.4-5.4.1-44.17-4417.00.90-4417.00.10 ດ້າມເຄື່ອງມືທີ່ເຮັດດ້ວຍໄມ້

  

5.4.2 ຮູບຫຸ່ນເກີບບູດ, ກົ້ນເກີບ

 

**6 - 44.18 ຜະລິດຕະພັນໄມ້ປະກອບໃນອາຄານ**

6.1 - 4418.10.00 ຊຸດປ່ອງຢ້ຽມ

 

6.2 - 4418.20.00 ຊຸດປະຕູ






6.2.3 ບານຕູ້ເຮືອນຄົວ



6.3 – 4418.50.00 ແຜ່ນໄມ້ມຸງຫຼັງຄາ






6.4 – 4418.50.00 ແຜ່ນໄມ້ຮົ້ວ






6.5 - 4418.71.00 ແຜ່ນໄມ້ປະກອບແບບລາຍໂມເສດ





6.6 – 4418.72.00 ຜະລິດຕະພັນໄມ້ຂອບອັດເປັນຊັ້ນ




6.7 - 4418.72.00 ຜະລິດຕະພັນໄມ້ບົວ




6.8 – 6.8.1- 6.8.2 - 4418.72.00 ຊຸດຂັ້ນໄດ (ຕົວນອນ ແລະ ຕົວຕັ້ງ)




6.9 - 4418.72.00 ຜະລິດຕະພັນໄມ້ລູກຕິ້ງ

<table>
<tr><td>6.9.1 ລູກຕິ່ງຮູບຊົງກົມ<br>
</td><td>6.9.2 ລູກຕິ່ງຮູບຊົງສີ່ຫຼ່ຽມ<br></td></tr>
<tr><td colspan="2">7 - ເຄື່ອງຫັດຖະກຳ ທີ່ເຮັດດ້ວຍໄມ້</td></tr>
<tr><td>7.1 ຜະລິດຕະພັນໄມ້ທີ່ໃຊ້ເທິງໂຕະອາຫານ<br></td><td>7.2 - ຂຽງ<br></td></tr>
<tr><td colspan="2">7.3 - 44.20 - 4420.10.00 - ຜະລິດຕະພັນເຄື່ອງຫັດຖະກຳໄມ້<br></td></tr>
</table>

7.4 - 44.21 - 4421.10.00
ຜະລິດຕະພັນຂໍເກາະເສື້ອ



7.5-4421.90.10-ຜະລິດຕະພັນແກ່ນ, ຫຼອດ, ກະສວຍ, ຫຼອດດ້າຍຫຍິບຜ້າ




7.6 & 7.7- 4421.90.20 & 4421.90.94 – ໄມ້ຂີດໄຟ, ໄມ້ຈີ້ມແຂ້ວ



7.8 - 4421.90.99; 4408.10.10 & 4408.39.10 - ລູກປັດສຳລັບນັກບວດ, ໄມ້ກ້ານສໍ



7.9 - ເຄື່ອງດົນຕີທີ່ເຮັດດ້ວຍໄມ້




**8 - 94.01 - ເຄື່ອງເຟີນີເຈີທີ່ເຮັດດ້ວຍໄມ້**

8.1 - 9401.61.00 - ສະໂລງໄມ້, ສະໂລງໄມ້ຫຸ້ມເບາະທຸກຊະນິດສຳເລັດຮູບ.



8.2 - 9401.61.00 - ຕັ່ງໄມ້, ຕັ່ງໄມ້ຫຸ້ມເບາະ ທຸກຊະນິດສຳເລັດຮູບ



8.3 – 94.03 – 9403.60.10 - ໂຕະໄມ້

8.3.1 ທຸກຊະນິດສຳເລັດຮູບ





8.3.2 ໂຕະໜ້າມົນໄມ້ແຜ່ນດຽວ (ເສັ້ນຜ່າໃຈກາງ ≤120 ຊມ)

8.4 – 9403.60.10 - ຕູ້ໄມ້ທຸກຊະນິດສຳເລັດຮູບ

| | |
|---|---|
|  |  |
| 8.5 - 9403.60.10 - ຕຽງ ໄມ້ທຸກຂະນິດສຳເລັດຮູບ | 8.6 – 9403.00.00 - ເຄື່ອງຕົບແຕ່ງອື່ນໆ ທີ່ເປັນເຟີນີເຈີ ດ້ວຍໄມ້ |
|  | 8.6.1 - 9403.30.00 - ເຄື່ອງເຟີນີເຈີທີ່ໃຊ້ໃນຫ້ອງການ  |
| 8.6.2 - 9403.40.00 - ເຄື່ອງເຟີນີເຈີທີ່ໃຊ້ໃນເຮືອນຄົວ  | 8.6.3-9403.50.00 - ເຄື່ອງເຟີນີເຈີທີ່ໃຊ້ໃນຫ້ອງນອນ  |

## II. ຮູບພາບ: ລາຍການ (ບັນຊີ) ຜະລິດຕະພັນ “ໄມ້ປູກ” ເພື່ອສົ່ງອອກ

(ໄມ້ວິກ, ໄມ້ກະຖິນເທພາ, ໄມ້ກະຖິນນາລົງ ແລະ ຢາງພາລາ)

<table>
<tr><td colspan="2">1. ຖ່ານໄມ້ທຸກຂະໜາດ<br></td></tr>
<tr><td colspan="2">2. ໄມ້ຄ້ຳແບບ, ໄມ້ຂ້າວ, ໄມ້ຮົ້ວ (ໄມ້ກົມ) , ໄມ້ເລື່ອຍເປັນແຜ່ນ</td></tr>
<tr><td>2.1. ໄມ້ຄ້ຳແບບ, ໄມ້ຂ້າວ, ໄມ້ຮົ້ວ (ໄມ້ກົມ) ເສັ້ນຜ່າໃຈກາງ ສະເລ່ຍ ≤ 12 ຊມ<br></td><td>2.2. ໄມ້ເລື່ອຍເປັນແຜ່ນ ຂະໜາດ 5x15x200 ຊມ<br></td></tr>
<tr><td>3. ໄມ້ເກດສະໜາ (ບົດເປັນຝຸ່ນ ຫຼື ສັບເປັນປ່ຽງນ້ອຍໆ)<br></td><td>4. ຜະລິດຕະພັນເຫຍື່ອໄມ້<br></td></tr>
<tr><td>5. ຜະລິດຕະພັນໄມ້ປອກ ແລະ ໄມ້ຝານ</td><td>6. ຜະລິດຕະພັນໄມ້ປູພື້ນ S4S</td></tr>
</table>

<table>
<tr>
<td>
</td>
<td></td>
</tr>
<tr>
<td colspan="2">7. ຜະລິດຕະພັນໄມ້ ພາເລດ<br></td>
</tr>
</table>

## III. ຮູບພາບ: ລາຍການ (ບັນຊີ) ຜະລິດຕະພັນ “ໄມ້ປ່ອງ ແລະ ຫວາຍ” ເພື່ອສົ່ງອອກ

1. ຜະລິດຕະພັນ ທີ່ເຮັດດ້ວຍໄມ້ປ່ອງ ແລະ ຫວາຍ

1.1 ຜະລິດຕະພັນຈາກໄມ້ປ່ອງ






1.2 ຜະລິດຕະພັນສຳເລັດຮູບ ທີ່ເຮັດດ້ວຍຫວາຍ



